**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ ເລກທີ 298/ກຄທ

ນະຄອນຫຼວງວຽງຈັນ, ວັນທີ 03 / 05. /2022

# ແຈ້ງການ

**ເຖິງ:** ທ່ານ ຜູ້ອໍານວຍການທະນາຄານທຸລະກິດ ແລະ ຫົວໜ້າສາຂາທະນາຄານທຸລະກິດຕ່າງປະເທດ

**ເລື່ອງ:** ການລາຍງານກ່ຽວກັບການເຄື່ອນໄຫວຄຸ້ມຄອງບໍລິຫານຂອງທະນາຄານທຸລະກິດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 955/ທຫລ, ລົງວັນທີ 07 ພະຈິກ 2013.

ເພື່ອເປັນຂໍ້ມູນຕິດຕາມ ກວດກາການເຄື່ອນໄຫວຄຸ້ມຄອງບໍລິຫານທະນາຄານທຸລະກິດ ຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ ໂດຍສະເພາະຕິດພັນກັບການບໍລິຫານຄວາມສ່ຽງ ແນໃສ່ຮັກສາຄວາມໝັ້ນຄົງ ຢ່າງຍືນຍົງຂອງທະນາຄານທຸລະກິດທົ່ວລະບົບ, ກົມຄຸ້ມຄອງທະນາຄານທຸລະກິດ (ກຄທ), ທະນາຄານແຫ່ງ ສປປ ລາວ ແຈ້ງໃຫ້ບັນດາທະນາຄານທຸລະກິດ ລວມທັງສາຂາທະນາຄານທຸລະກິດຕ່າງປະເທດ ລາຍງານກ່ຽວກັບການເຄື່ອນໄຫວຄຸ້ມຄອງບໍລິຫານຂອງຕົນ ໂດຍສະໜອງເອກະສານ ແລະ ຂໍ້ມູນມາຍັງ ກຄທ ດັ່ງນີ້:

1) ສໍາລັບທະນາຄານທຸລະກິດ, ໃຫ້ນໍາສົ່ງສໍາເນົາບົດບັນທຶກ ແລະ ມະຕິຂອງກອງປະຊຸມຜູ້ຖືຮຸ້ນ, ຂອງສະພາບໍລິຫານ ແລະ ຂອງຄະນະກໍາມະການຂອງສະພາບໍລິຫານຂອງທະນາຄານທຸລະກິດ.

   ບົດບັນທຶກກອງປະຊຸມ ຕາມທີ່ກໍານົດໃນຂໍ້ 1 ນີ້ຕ້ອງລະບຸລາຍລະອຽດ ດັ່ງນີ້:

   - ວັນອອກແຈ້ງເຊີນປະຊຸມ, ຜູ້ອອກແຈ້ງເຊີນ, ລາຍການເອກະສານຄັດຕິດແຈ້ງເຊີນ ແລະ ຊ່ອງທາງການສົ່ງແຈ້ງເຊີນ;
   - ປະເພດກອງປະຊຸມ (ສາມັນ ຫຼື ວິສາມັນ);
   - ວັນເວລາ ແລະ ສະຖານທີ່ປະຊຸມຕົວຈິງ;
   - ລາຍຊື່ຜູ້ເຂົ້າຮ່ວມ ແລະ ຜູ້ບໍ່ໄດ້ເຂົ້າຮ່ວມ (ພ້ອມເຫດຜົນ);
   - ປະທານກອງປະຊຸມ, ເລຂາກອງປະຊຸມ ແລະ ວາລະການປະຊຸມ;
   - ສັງລວມການປະກອບຄໍາເຫັນຂອງບັນດາຜູ້ເຂົ້າຮ່ວມກອງປະຊຸມ;
   - ກໍລະນີມີການລົງມະຕິ, ໃຫ້ລະບຸຈໍານວນຜູ້ລົງຄະແນນສຽງ ໃນນັ້ນໃຫ້ລະບຸລາຍຊື່ຜູ້ທີ່ລົງຄະແນນສຽງເຫັນດີ, ຜູ້ທີ່ລົງຄະແນນສຽງບໍ່ເຫັນດີ ແລະ ຜູ້ທີ່ບໍ່ລົງຄະແນນສຽງ ພ້ອມດ້ວຍເຫດຜົນຂອງການລົງຄະນະແນນສຽງ ຫຼື ການບໍ່ລົງຄະແນນສຽງ;

2) ສໍາລັບ ສາຂາທະນາຄານທຸລະກິດຕ່າງປະເທດ, ໃຫ້ນໍາສົ່ງສໍາເນົາບົດບັນທຶກ, ຂໍ້ຕົກລົງ ຫຼື ເອກະສານທີ່ຄ້າຍຄືກັນ ຂອງສໍານັກງານໃຫຍ່ ທີ່ກ່ຽວກັບສາຂາດັ່ງກ່າວ ແລະບົດບັນທຶກກອງປະຊຸມຜູ້ບໍລິຫານສາຂາຕາມທີ່ກໍານົດໄວ້ໃນກົດລະບຽບຂອງສາຂາດັ່ງກ່າວ(ຖ້າມີ).

3) ສໍາລັບທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ໃຫ້ນໍາສົ່ງສໍາເນົາບົດລາຍງານການກວດສອບພາຍໃນຂອງຕົນ.

4) ບັນດາເອກະສານຂ້າງເທິງ ຕ້ອງເຮັດເປັນພາສາລາວ. ສໍາລັບ ເອກະສານ ທີ່ສ້າງຂຶ້ນໂດຍສໍານັກງານໃຫຍ່ ຫຼື ຜູ້ຖືຮຸ້ນຕ່າງປະທດ ຕ້ອງແປເປັນພາສາລາວ ແລະ ໄດ້ຮັບການຢັ້ງຢືນຈາກຜູ້ອໍານວຍການທະນາຄານ ຫຼື ຫົວໜ້າສາຂາທະນາຄານທຸລະກິດຕ່າງປະເທດນັ້ນ.

5) ໃຫ້ສະໜອງບັນດາເອກະສານຂ້າງເທິງມາຍັງ ກຄທ ພາຍໃນ 10 ວັນລັດຖະການ ນັບແຕ່ວັນທີ່ປິດກອງປະຊຸມ ຫຼື ນັບແຕ່ວັນທີ່ສໍານັກງານໃຫຍ່ໄດ້ອອກມະຕິ ຫຼື ຂໍ້ຕົກລົງສໍາລັບສາຂາທະນາຄານທຸລະກິດຕ່າງປະເທດ ຫຼື ນັບແຕ່ວັນທີ່ສະພາບໍລິຫານໄດ້ຮັບຮອງເອົາບົດລາຍງານການກວດສອບພາຍໃນຕາມແຕ່ລະກໍລະນີຂ້າງເທິງ.

6) ເພື່ອເປັນການປະຫຍັດຊັບພະຍາກອນ, ໃຫ້ສະໜອງເອກະສານສະແກນໃນຮູບແບບເອເລັກໂຕຣນິກ ມາທີ່ banksupervision_legal@bol.gov.la

7) ໃຫ້ຮັກສາເອກະສານຕົ້ນສະບັບທັງໝົດຂ້າງເທິງ ລວມທັງບັນດາເອກະສານທີ່ໃຊ້ໃນການປະຊຸມ ແລະ ການບັນທຶກ (ວິດີໂອ, ສຽງ) ຂອງການປະຊຸມໄວ້ ຢ່າງໜ້ອຍ 10 (ສິບ) ປີ.

8) ໃຫ້ເລີ່ມຈັດຕັ້ງປະຕິບັດແຈ້ງການສະບັບນີ້ ນັບແຕ່ເດືອນມິຖຸນາ 2022 ເປັນຕົ້ນໄປ. ແຈ້ງການສະບັບນີ້ປ່ຽນແທນແຈ້ງການເລກທີ 88/ກຄທ ລົງວັນທີ 5 ກຸມພາ 2018. ສໍາລັບການເຄື່ອນໄຫວຄຸ້ມຄອງບໍລິຫານກ່ອນເດືອນພຶດສະພາ 2022 ແມ່ນໃຫ້ປະຕິບັດການລາຍງານຕາມ ແຈ້ງການເລກທີ 88/ກຄທ ດັ່ງກ່າວເສຍກ່ອນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມ**

ອາລຸນ ບຸນຍົງ